**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ                                                                 ເລກທີ 56 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27 / 10 /2015

# ຄຳສັ່ງ

## ວ່າດ້ວຍ ການຄຸ້ມຄອງ ແລະ ແກ້ໄຂວຽກງານ ເຂດແດນເຊື່ອມຕໍ່ລະຫວ່າງ ນະຄອນຫຼວງ, ແຂວງ ກັບແຂວງ ທົ່ວປະເທດ

ເຖິງ: - ທ່ານ ລັດຖະມົນຕີວ່າການກະຊວງພາຍໃນ
- ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາ ທ່ານເຈົ້າແຂວງ ໃນທົ່ວປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ສະພາບບັນຫາຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານເຂດເຊື່ອມຕໍ່ລະຫວ່າງແຂວງ ກັບແຂວງ ໃນທົ່ວປະເທດ;
- ອີງຕາມ ບົດລາຍງານຂອງກະຊວງພາຍໃນ ສະບັບເລກທີ 12/ພນ, ລົງວັນທີ 30 ກັນຍາ 2015

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍໃນປີ 1975 ເປັນຕົ້ນມາ ພັກ ແລະ ລັດຖະບານໄດ້ເອົາໃຈໃສ່ໃນການປັບປຸງ, ຈັດແບ່ງເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ,ແຂວງ ກັບ ແຂວງໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດສັງຄົມ ແລະ ຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນແຕ່ລະໄລຍະ. ໃນປີ 1998 ນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງສະບັບເລກທີ 27/ນຍ, ລົງວັນທີ່ 18 ທັນວາ 1998 ວ່າດ້ວຍການແກ້ໄຂເຂດເຊື່ອມຕໍ່ລະຫວ່າງແຂວງກັບແຂວງ; ບົນພື້ນຖານຄຳສັ່ງສະບັບນີ້ນະຄອນຫຼວງ ແລະ ບັນດາແຂວງທີ່ມີເຂດແດນຕິດຈອດກັນໄດ້ສຳເລັດການເຊັນບົດບັນທຶກກ່ຽວກັບເຂດເຊື່ອມຕໍ່ລະຫວ່າງກັນໃນປີ 1999. ມາຮອດປີ 2005 ພາຍຫຼັງປະກາດໃຊ້ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປີ 2003 ທີ່ກຳນົດເງື່ອນໄຂສ້າງຕັ້ງແຂວງວ່າໃຫ້ມີພົນລະເມືອງແຕ່ ຮ້ອຍຊາວພັນຄົນ ແລະມີຫ້າເມືອງຂຶ້ນໄປຈຶ່ງເຮັດໃຫ້ສີ່ແຂວງພາກໃຕ້ໄດ້ເຊັນບົດບັນທຶກກັນໃໝ່ໃນປີ 2005 ແລະ ມີຄຳສັ່ງນາຍົກ

ລັດຖະມົນຕີເລກທີ16/ນຍ, ລົງວັນທີ 30 ພຶດສະພາ 2007 ກ່ຽວກັບເຂດເຊື່ອມຕໍ່ 4 ແຂວງພາກໃຕ້ໂດຍຕົກລົງແບ່ງພື້ນທີ່ປົກຄອງຂອງແຂວງຈຳປາສັກ, ສາລະວັນ ແລະ ອັດຕະປື ສ່ວນໃດສ່ວນໜຶ່ງໄປໃຫ້ແຂວງເຊກອງຄຸ້ມຄອງ. ນິຕິກຳກ່ຽວກັບເຂດເຊື່ອມຕໍ່ເຫຼົ່ານັ້ນໄດ້ເປັນບ່ອນອີງທີ່ໜັກແໜ້ນໃຫ້ແກ່ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນໃນການສ້າງແຜນການ ແລະ ດຳເນີນການຄຸ້ມຄອງບໍລິຫານ, ສ້າງສາພັດທະນາເສດຖະກິດ-ສັງຄົມ ແລະ ວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງເຮັດໃຫ້ສະພາບການຄຸ້ມຄອງບໍລິຫານເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງ ກັບ ແຂວງພາຍໃນປະເທດມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍດີ ໂດຍທົ່ວໄປ, ປະຊາຊົນມີຄວາມເບີກບານມ່ວນຊື່ນໃນການສ້າງສາພັດທະນາທ້ອງຖິ່ນຂອງຕົນເອງ ແລະ ເປັນເຈົ້າເຄົາລົບ ແລະ ຈັດຕັ້ງປະຕິບັດຕາມບົດບັນທຶກໄດ້ຢ່າງເຂັ້ມງວດເປັນສ່ວນໃຫຍ່.

ແຕ່ຍ້ອນວ່າສະພາບທາງດ້ານເສດຖະກິດ-ສັງຄົມ ຢູ່ພາຍໃນປະເທດນັບມື້ນັບມີການຂະຫຍາຍຕົວ, ປະຊາຊົນຕ້ອງການສ້າງສາພັດທະນາຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ; ມີການສ້າງຕັ້ງແຂວງ ແລະ ເມືອງຂຶ້ນໃໝ່ຈຳນວນໜຶ່ງຈຶ່ງເຮັດໃຫ້ການຄຸ້ມຄອງ ແລະ ປົກປັກຮັກສາເຂດແດນເຊື່ອມຕໍ່ຂອງແຕ່ລະທ້ອງຖິ່ນມີບາງບັນຫາຫຍຸ້ງຍາກເກີດຂຶ້ນ ເຊັ່ນ: ສະພາບການຈັດຕັ້ງ ແລະ ປະຊາຊົນບໍ່ເຫັນດີເຫັນພ້ອມນຳເສັ້ນແບ່ງເຂດແດນລະຫວ່າງແຂວງ ກັບ ແຂວງ ໃນບາງຈຸດຂອງບາງແຂວງ ທີ່ກຳນົດໃນບົດບັນທຶກ ທີ່ໄດ້ເຊັນກັນໃນປີ 1999 , ປີ 2005 ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ປີ 2007 ສຳລັບ 4 ແຂວງພາກໃຕ້; ປະຊາຊົນຂອງແຂວງໜຶ່ງຂ້າມໄປຕັດໄມ້ທຳລາຍປ່າໃນເຂດຄຸ້ມຄອງຂອງແຂວງ ທີ່ມີເຂດແດນຕິດຈອດກັນ; ປະຊາຊົນຍົກຍ້າຍໄປຕັ້ງຖິ່ນຖານ ແລະ ບຸກລຸກທີ່ດິນຂອງແຂວງອື່ນແບບບໍ່ຖືກຕ້ອງ; ບ້ານປະຊາຊົນເຕີບໃຫຍ່ກວມເອົາເສັ້ນເຂດແດນເຮັດໃຫ້ບ້ານດຽວຕັ້ງຢູ່ດິນແດນຂອງສອງແຂວງ; ການຈັດຕັ້ງ ແລະ ປະຊາຊົນຖົກຖຽງກັນຍ້ອນຮັບຮູ້ເສັ້ນແບ່ງເຂດແດນຕາມທັດສະນະຂອງໃຜລາວ; ປະຊາຊົນຂໍຍົກຍ້າຍໄປຂຶ້ນກັບເມືອງ, ແຂວງອື່ນ ທີ່ຄິດວ່າມີຄວາມສະດວກກວ່າ; ປະຊາຊົນປະຕິເສດການຍົກຍ້າຍສຳມະໂນຄົວມາຂຶ້ນນຳເມືອງ, ແຂວງທີ່ບ້ານພວກຕົນຕັ້ງຢູ່; ມີການສ້າງຕັ້ງແຂວງໃໝ່ຂຶ້ນ ແຕ່ບໍ່ທັນໄດ້ກຳນົດເຂດແດນລະຫວ່າງແຂວງອ້ອມຂ້າງໃຫ້ຈະແຈ້ງ ແລະ ອື່ນໆ.

ເພື່ອແກ້ໄຂບັນຫາທີ່ກ່າວມາຂ້າງເທິງນັ້ນ, ທັງເປັນການເສີມຂະຫຍາຍສິດເປັນເຈົ້າຂອງແຕ່ລະທ້ອງຖິ່ນໃນການຄຸ້ມຄອງ, ປົກປັກຮັກສາເຂດແດນເຊື່ອມຕໍ່ຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ນະຄອນຫຼວງ, ແຕ່ລະແຂວງ ຕັ້ງໜ້າສຶກສາອົບຮົມ ແລະ ນຳພາປະຊາຊົນຂອງຕົນຈັດຕັ້ງປະຕິບັດ ແລະ ປົກປັກຮັກສາເສັ້ນແບ່ງເຂດແດນລະຫວ່າງ ນະຄອນຫຼວງ, ແຂວງ ກັບ ແຂວງ ຕາມບົດບັນທຶກ ທີ່ໄດ້ເຊັນກັນໃນປີ 1999; ລະຫວ່າງ 4 ແຂວງພາກໃຕ້ ແມ່ນຕາມບົດບັນທຶກປີ 2005, ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 16/ນຍ, ລົງວັນທີ 30 ພຶດສະພາ 2007 ແລະ ບົດບັນທຶກກອງປະຊຸມຮອບວຽນວຽກງານເຂດເຊື່ອມຕໍ່ລະຫວ່າງແຂວງເຊກອງ, ສາລະວັນ, ຈຳປາສັກ ແລະ ອັດຕະປື ລົງວັນທີ 30 ທັນວາ 2014; ລະຫວ່າງ

ເມືອງວຽງທອງ, ແຂວງບໍລິຄຳໄຊ ກັບ ເມືອງໜອກ, ແຂວງຊຽງຂວາງ ຕາມບົດບັນທຶກສະບັບລົງວັນທີ 6 ກໍລະກົດ 2012; ລະຫວ່າງເມືອງນາແລ, ແຂວງຫຼວງນ້ຳທາ ກັບ ເມືອງນາໝໍ້, ແຂວງອຸດົມໄຊຕາມບົດບັນທຶກສະບັບລົງວັນທີ 21 ພຶດສະພາ 2014 ໃນຈຸດທີ່ເປັນເອກະພາບກັນແລ້ວໃຫ້ໄດ້ຢ່າງເຂັ້ມງວດ;

2. ສຳລັບບ່ອນທີ່ບົດບັນທຶກປີ 1999, ບົດບັນທຶກປີ 2005, ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 16/ນຍ ລົງວັນທີ 30 ພຶດສະພາ 2007 ແລະ ບົດບັນທຶກກອງປະຊຸມຮອບວຽນ ວຽກງານເຂດເຊື່ອມຕໍ່ລະຫວ່າງແຂວງເຊກອງ, ສາລະວັນ, ຈຳປາສັກ ແລະ ອັດຕະປື ຄັ້ງວັນທີ 30 ທັນວາ 2014 ທີ່ກຳນົດບໍ່ຈະແຈ້ງ ຫຼື ໃນຈຸດທີ່ກຳນົດຈະແຈ້ງແລ້ວ ແຕ່ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ ຫຼື ປະຊາຊົນບໍ່ເຫັນດີຍ້ອນເຫດຜົນໃດໜຶ່ງ, ເກີດມີຄວາມຂັດແຍ່ງຈົນບໍ່ສາມາດຈັດຕັ້ງປະຕິບັດໄດ້ນັ້ນ ໃຫ້ສອງແຂວງທີ່ມີສ່ວນກ່ຽວຂ້ອງແຕ່ງຕັ້ງຄະນະກຳມະການຮັບຜິດຊອບເຂດແດນເຊື່ອມຕໍ່ຂອງຕົນຂຶ້ນ ເພື່ອປຶກສາຫາລື, ຊອກຊ່ອງທາງແກ້ໄຂໂດຍຖືຜົນປະໂຫຍດລວມເປັນຫຼັກ ເພື່ອໃຫ້ໄດ້ຮັບການແກ້ໄຂ, ຈັດຕັ້ງປະຕິບັດໄດ້ ແລະ ພ້ອມກັນເຮັດບົດບັນທຶກເຂດແດນເຊື່ອມຕໍ່ສະບັບໃໝ່;

3. ໃຫ້ກະຊວງພາຍໃນ ອອກຄຳແນະນຳລະອຽດກ່ຽວກັບການຄຸ້ມຄອງ ແລະ ແກ້ໄຂວຽກງານເຂດແດນເຊື່ອມຕໍ່ລະຫວ່າງ ນະຄອນຫຼວງ, ແຂວງ ກັບ ແຂວງ ຕາມຄຳສັ່ງສະບັບນີ້ ພ້ອມທັງຈັດຕັ້ງການເຜີຍແຜ່, ຝຶກອົບຮົມ ຄຳສັ່ງ, ຄຳແນະນຳ ແລະ ນຳພາເຮັດທົດລອງ ເພື່ອຖອດຖອນບົດຮຽນໃຫ້ທຸກແຂວງໄດ້ນຳໄປຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ;

4. ລັດຖະມົນຕີວ່າການກະຊວງພາຍໃນ, ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ, ເຈົ້າເມືອງ ຊີ້ນຳຂະແໜງການທີ່ກ່ຽວຂ້ອງຂັ້ນຕົນໃຫ້ຂຶ້ນແຜນງົບປະມານຮັບໃຊ້ການເຄື່ອນໄຫວ ໃນການແກ້ໄຂວຽກງານເຂດແດນເຊື່ອມຕໍ່ຕາມຂອບເຂດໜ້າທີ່ຮັບຜິດຊອບຂອງຂັ້ນຕົນ, ຮັບປະກັນໃຫ້ການແກ້ໄຂເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງ ກັບ ແຂວງ ສຳເລັດຜົນທົ່ວປະເທດ ພາຍໃນປີ 2017;

5. ກະຊວງພາຍໃນ, ນະຄອນຫຼວງ, ແຂວງ, ເມືອງ ທີ່ມີຄວາມຫຍຸ້ງຍາກ ກ່ຽວກັບເຂດແດນເຊື່ອມຕໍ່ ກັບແຂວງອ້ອມຂ້າງ ທີ່ຕ້ອງໄດ້ແກ້ໄຂ ໃຫ້ຖືເອົາວຽກງານດັ່ງກ່າວນີ້ເປັນວຽກງານບູລິມະສິດໜຶ່ງ ຂອງຕົນແຕ່ນີ້ ຮອດປີ 2018;

6. ກະຊວງພາຍໃນ ສັງລວມບົດບັນທຶກເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງ ກັບ ແຂວງໃນທົ່ວປະເທດລາຍງານລັດຖະບານພິຈາລະນາ ແລະ ນຳສະເໜີກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງຕາມກົດໝາຍໃຫ້ສຳເລັດ ໃນປີ 2018;

7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ທຸກເນື້ອໃນຄຳສັ່ງຂອງນາຍົກລັດຖະມົນຕີ, ຂອງນິຕິກຳທີ່ຕ່ຳກວ່າ ແລະ ຂັດກັບຄຳສັ່ງຂອງນາຍົກລັດຖະມົນຕີສະບັບນີ້ ລ້ວນແຕ່ຖືກລົບລ້າງ. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດຜົນສຳເລັດ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ